**ຍິນດີຕ້ອນຮັບສູ່** Minnesota TEFAP Food Shelf **ນີ້**!

## ນັບແຕ່ວັນທີ 1 ມັງກອນ 2025

ເນື່ອງຈາກການປ່ຽນແປງກົດລະບຽບເມື່ອບໍ່ດົນມານີ້ຈາກທາງ USDA, ທ່ານ**<u>ບໍ່ຈຳເປັນຕ້ອງໃຫ້ທີ່ຢູ່ຂອງທ່ານອີກ</u>**ເພື່ອຮັບອາຫານຢູ່ບ່ອນແຈກຢາຍ TEFAP (ຖ້ານອາຫານ, ໂຄງການອາຫານ, ຊາດຊົນເຜົ່າ ຫຼື Tribal Nations).

### ທ່ານຈຳເປັນຕ້ອງໃຫ້ຂໍ້ມູນໃດແດ່ເພື່ອໃຫ້ໄດ້ຮັບອາຫານ?

- ຊື່ຂອງທ່ານ
- ຈຳນວນເດັກນ້ອຍ, ຜູ້ໃຫຍ່ ແລະ ຜູ້ອາວຸໂສຢູ່ໃນຄົວເຮືອນຂອງທ່ານ
- ລະຫັດໄປສະນີ (ເປັນທາງເລືອກ)
- ຄຳຢືນຢັນວ່າລາຍຮັບຄົວເຮືອນຂອງທ່ານຢູ່ທີ່ ຫຼື ຕ່ຳກວ່າ 300% ຕາມບົດແນະນຳຄວາມທຸກຍາກຂອງລັດຖະບານກາງ

**ນັ້ນແມ່ນຂໍ້ມູນທັງໝົດທີ່ຈຳເປັນເພື່ອໃຫ້ໄດ້ຮັບອາຫານ**!

### <u>ບໍ່</u>ຈຳເປັນຕ້ອງມີສິ່ງຕໍ່ໄປນີ້:

- ບໍ່ຕ້ອງມີການລະບຸຕົວຕົນ, ບໍ່ຈຳເປັນຕ້ອງມີຫຼັກຖານທີ່ຢູ່, ບໍ່ຈຳເປັນຕ້ອງມີຫຼັກຖານລາຍໄດ້, ບໍ່ຈຳເປັນຕ້ອງມີຫຼັກຖານຂະໜາດຄົວເຮືອນ
- ບໍ່ຕ້ອງມີເລກປະກັນສັງຄົມ, ບໍ່ຕ້ອງມີຫຼັກຖານສະຖານະການເປັນພົນລະເມືອງ/ການເຂົ້າເມືອງ
- ບໍ່ຈຳເປັນຕ້ອງມີຂໍ້ມູນອື່ນນອກເໜືອໄປຈາກສິ່ງທີ່ຢູ່ໃນແບບຟອມນີ້ທີ່ຈະຕ້ອງການເອົາມາຈາກທ່ານເພື່ອເຂົ້າເຖິງອາຫານຢູ່ໃນບ່ອນນີ້.
- ອາດຈະມີການຂໍເອົາຂໍ້ມູນເພີ່ມເຕີມ, ແຕ່ທ່ານບໍ່ຈຳເປັນຕ້ອງໃຫ້ມັນເພື່ອໃຫ້ໄດ້ຮັບອາຫານ.

**ພະແນກເດັກ, ເຍົາວະຊົນ**
**ແລະ ຄອບຄົວລັດມິນີໂຊຕາ**
ຫ້ອງການໃຫ້ໂອກາດທາງດ້ານເສດຖະກິດ
mntefap.dcyf@state.mn.us

**ສາຍດ່ວນຊ່ວຍເຫຼືອອາຫານລັດມິນີໂຊຕາ**
ໂທ ຫຼື ສົ່ງຂໍ້ຄວາມຫາເບີ 1-888-711-1151
www.hungersolutions.org/find-help/

**ສະຖາບັນນີ້ເປັນຜູ້ໃຫ້ບໍລິການທີ່ໃຫ້ໂອກາດເທົ່າທຽມກັນ**.